# ອຳນາດການປົກຄອງສຸຂະພາບຈິດເຂດເຊົາດ໌ເໜືອ

# (North Sound Mental Health Administration)

## ແຜນສຸຂະພາບຈິດຄົນໄຂ້ພາຍໃນທີ່ໄດ້ຈ່າຍລ່ວງໜ້າສຳຮັບ

### ຄາວຕີ້ຕ່າງໆເຊັ່ນ:ໄອແລນດ໌, ແຊນວານ,ສະແກັດຈິຕ, ສະໂນໂຮມິສ, ແລະວັດຄຳ


ຫ້ອງການອຳນາດການປົກຄອງຕ່າງໆ

117 North First Street, ຫ້ອງ 8

Mount Vernon, WA 98273

ເລກໂທ 360.416.7013 ເລກແຟັກສ໌ 360.416.7017

ເລກໂທຟຣີ 800.684.3555 ເລກໂທສາຍພິການTTY 360.419.9008

ອີເມລ໌ nsmha@nsmha.org ເລກໂທຟຣີ ສາຍປ້ອງກັນຜົນປະໂຍດຂອງປະຊາກອນ (Ombuds) 888.336.6164

ແວບໄຊທ໌ http://nsmha.org


ໃບຂ່າວສານນີ້ມີໃຫ້ໃນຮູບເອກະສານທີ່ສາມາດບັນຈຸພິມອອກຈາກແວບໄຊທ໌ຂອງພວກເຮົາໄດ້ທີ່ http://nsmha.org ເປັນພາສາອັງກິດ, ພາສາສະແປນິສ, ພາສາຣັດເຊັງ, ພາສາຈີນ, ພາສາເກົາຫລີ, ພາສາລາວ, ພາສາວຽດນາມ, ພາສາໂຊມາລີ, ແລະພາສາຂະເມນ.

### ແມ່ນຫຍັງຄືຈຸດເປົ້າໝາຍຂອງອຳນາດການປົກຄອງສຸຂະພາບຈິດເຂດເຊົາດ໌ເໜືອ (NSMHA)?

ພວກເຮົາໄດ້ຮວມກັນເຂົ້າເພື່ອຊຸກຍູ້ຊຸມຊົນແລະອູ້ມຊູການສວ່າງເຊົາຈາກຄວາມປ່ວຍເປັນສຸຂະພາບຈິດແກ່ຄົນຂອງພວກເຮົາຊຶ່ງໄດ້ຮັບບໍຣິການໃນເຂດເຊົາດ໌ເໜືອ, ໂດຍຜ່ານຄຸນນະພາບສູງ, ການບໍຣິການຕ່າງໆທີ່ເດັ່ນທາງດ້ານວັດທະນະທຳ. ມັນແມ່ນຄວາມຮັບຜິດຊອບຂອງ NSMHA ເພື່ອໃຫ້ຄວາມໝັ້ນໃຈໃນ:

- ການບໍຣິການສຸຂະພາບຈິດຍາມເກີດວິກິດຕະການແມ່ນມີໃຫ້ຕລອດ 24 ຊົ່ວໂມງຕໍ່ມື້, ອາທິດລະ 7 ມື້ແກ່ຜູ້ໃດຜູ້ໜຶ່ງທີ່ຢູ່ໃນເຂດ.
- ການເຂົ້າຫາການບໍຣິການທີ່ຈຳເປັນຕ່າງໆທາງດ້ານພະຍາບານໂຣກຈິດຢ່າງທັນການແມ່ນມີໄວ້ໃຫ້ແກ່ທຸກຄົນຜູ້ມີເງື່ອນໄຂຕໍ່ເມດີເຄດ.
- ທຸກການບໍຣິການແມ່ນຕອບສະໜອງມາດຕະຖານການດູແລະການພະຍາບານສູງສຸດ.
- ການປິ່ນປົວສຸຂະພາບທັງໝົດແມ່ນເປັນທັງການຊຸກຍູ້ຈາກຜູ້ຊົມໃຊ້ແລະທັງເປັນຄວາມຕ້ອງການທີ່ຈຳເປັນຂອງມວນຊົນທັງສອງຢ່າງນຳ.
- ການປິ່ນປົວແມ່ນປົວສະເພາະລາຍບຸກຄົນ,ການປະສານງານແມ່ນອີງໃສ່ຈຸດແຂງຂອງການປະສານງານກັບຄອບຄົວແລະຊຸມຊົນ, ການເປີດຈິດໃຈຕໍ່ການປິ່ນປົວສວ່າງເຊົາແລະຄວາມຫວັງ.
- ຄວາມປອດໄພຂອງມວນຊົນເປັນສິ່ງນຳມາພິຈາຣະນາຢ່າງໃຫຍ່ຫລວງ.
- ການສືບຕໍ່ດູແລຮັກສາເພື່ອຕອບສະໜອງຄວາມຕ້ອງການທີ່ຈຳເປັນຕ່າງໆຂອງບຸກຄົນຢ່າງສິ້ນຕົວ, ແລະການເຂົ້າເຖິງການບໍຣິການຕ່າງໆໂດຍບໍ່ມີເຂດຈຳກັດ.

- ການບໍລິການຕ່າງໆແມ່ນໄດ້ຄິດຄຳນຶງເຖິງວັດທນະທຳແລະສິ່ງທີ່ເໝາະສົມ.

*ທ່ານກໍ່ເປັນຜູ້ໄດ້ຮັບການເຊື້ອເຊີນຮ່ວມປະຊຸມປະຈຳເດືອນຂອງຄນະອຳນວຍການແລະຄນະແນະນຳປຶກສາທັງຫລາຍຊຶ່ງຈັດຂຶ້ນຢູ່ຫ້ອງປະຊຸມຂອງ NSMHA, ທີ່ຢູ່ 117 North First Street, ຫ້ອງ 8, Mount Vernon, Washington.*

*ກອງປະຊຸມຄນະອຳນວຍການຈາກເວລາ: 1:30 - 3:00 ໃນມື້ວັນພະຫັດທີ່ສອງ* ຂອງແຕ່ລະເດືອນ.*

*ກອງປະຊຸມຄນະແນະນຳປຶກສາແມ່ນເວລາ: 1:00 - 3:00 ໃນວັນຄານທີ່ໜຶ່ງ* ຂອງແຕ່ລະເດືອນ.*
*ເພື່ອຂ່າວຂໍ້ມູນເພີ່ມເຕີມຫລືການຢັ້ງຢືນກອງປະຊຸມ, ກະຣຸນາໂທຫາ NSMHA ທີ່ເລກໂທ 360.416.7013 ຫລືຢ້ຽມຢາມແວບໄຊທ໌ຂອງພວກເຮົາທີ່.* http://nsmha.org

## ໂຕະບໍຣິການລູກຄ້າ

### ຂ້າພະເຈົ້າຈະຕິດຕໍ່ກັບໂຕະບໍຣິການລູກຄ້າຂອງຫ້ອງການ NSMHA ໄດ້ແນວໃດ?

ໃນຣະຫວ່າງ 8:00 ໂມງເຊົ້າ. ຫາ 5:00 ໂມງແລງ. ຈາກວັນຈັນເຖິງວັນ
ວັນສຸກ, ຣວມທັງວັນພັກຕ່າງໆນຳ: ເລກໂທຟຣີ 1.800.684.3555/360.416.7013
ສະເພາະຄົນພິການເຣື່ອງການໄດ້ຍິນ/ປາກເວົ້ານັ້ນ,ກະຣຸນາໂທສາຍTTYຂອງຫ້ອງການNSMHAທີ່360.419.9008
/ສາຍບໍຣິການຖ່າຍທອດສຽງຂອງຣັດວໍຊິງຕັນທີ່ 1.800.833.6384 ຫ້ອງການ NSMHA ຈະໃຫ້ການແປພາສາແກ່ຜູ້ທີ່ມີຄວາມຮູ້ຈຳກັດດ້ານພາສາອັງກິດ.

### ອຸດົມການຂອງຄວາມຫວັງແລະບາດກ້າວບົນເສັ້ນທາງການສວ່າງເຊົາ

ຫ້ອງການ NSMHA ແມ່ນຍຶດໝັ້ນຕໍ່ອຸດົມການຂອງຄວາມຫວັງແລະເສັ້ນທາງຕ່າງໆສຳຣັບສວ່າງເຊົາແກ່ຜູ້ຊົມໃຊ້ທັງຫລາຍໃນເຂດເຊົາດ໌ເໜືອ. ການສວ່າງເຊົາແມ່ນຣະບົບຜ່ານຜ່າຊຶ່ງບຸກຄົນທີ່ປ່ວຍເປັນໂຣກຈິດສາມາດມີຄວາມຫວັງ, ເຫັນຄຸນຄ່າຕົນເອງ, ມີສັກສີ, ແລະຊີວິດທີ່ມີຄວາມໝາຍ.

### ໃຜເປັນຜູ້ມີເງື່ອນໄຂເໝາະສົມ?

ທ່ານແລະສະມາຊິກຄອບຄົວຂອງທ່ານທີ່ຢູ່ໃນເຂດໄອແລນດ໌ຄາວຕີ້, ແຊນວານຄາວຕີ້, ສະແກັດຈິຕຄາວຕີ້, ວັດຄຳຫລືສະໂນໂຮມິສຄາວຕີ້.

### ມີການບໍຣິການປະເພດໃດແດ່ໄວ້ໃຫ້?

- ການມີສ່ວນແຊກເຂົ້າຮ່ວມການປິ່ນປົວໄລຍະສັ້ນ
- ການບໍຣິການວິກິດຕະການສຸກເສີນ
- ການອູ້ມຊູກາງເວັນ
- ການປິ່ນປົວແກ່ຄອບຄົວ
- ການຕີຣາຄາວັດຜົນແລະປິ່ນປົວດ່ຽວ
- ການບໍຣິການປິ່ນປົວຕ່າງໆສຳຣັບບຸກຄົນ

- ການບໍຣິການປິ່ນປົວຄົນໄຂ້ນອກດ້ວຍຄວາມໃກ້ສິດ
- ການບໍຣິການປິ່ນປົວຕ່າງໆທີ່ຣວມກຸ່ມ
- ການສຳພາດຮັບເອົາເຂົ້າມາ
- ການຈັດການເຣື່ອງການຢາ
- ການຄວບຄຸມເຣື່ອງການຢາ
- ການອູ້ມຊູຈາກໝູ່ຄູ່/ສູນກາງແວ່ນຳສົ່ງໃຫ້
- ການຕີຣາຄາວັດຜົນທາງດ້ານຈິດຕະວິດທະຍາ
- ການຈັດການສຳນວນການກັບດີຄືນສູ່ວຽກງານ
- ການດູແລທີ່ຜ່ອນເບົາ
- ສະໂມສອນສຸຂະພາບຈິດ
- ວຽກງານເພື່ອໃຫ້ຄວາມອູ້ມຊູ
- ການບໍຣິການໃຫ້ທຸ່ນທ່ຽງຄົງຕົວ
- ການສຶກສາເພື່ອຮັກສາໂຣກຈິດ
- ການຕີຣາຄາປະຊາກອນພິເສດ
- ການບໍຣິກາໃຫ້ໄດ້ຍິນ/ຫລືການບໍຣິການໆແປພາສາ
- ການບໍຣິການທີ່ເໝາະສົມຕໍ່ວັດທະນະທຳ
- ການບໍຣິການສຸຂະພາບຈິດໃນຂນະທີ່ຢູ່ໃນສະຖານທີ່ຈັດສັນໃຫ້

ການບໍຣິການນຕ່າງໆຕາມທີ່ບົ່ງບອກຂື້ນມານີ້ແມ່ນມີໃວ້ໃຫ້ສຳຣັບຜູ້ທີ່ໄດ້ລົງທະບຽນກັບແຜນເມດີເຄດແລະຜູ້ທີ່ເໝາະສົມຕໍ່ເງື່ອນໄຂທີ່ບໍ່ມີເມດີເຄດ, ພາຍໃນແຫລ່ງທີ່ມີໃວ້ບໍຣິການໃຫ້.

### ການບໍຣິການໃດທີ່ບໍ່ຖືກຄຸ້ມກັນ?

- ສະພາບການທີ່ບໍ່ສຸກເສີນ, ການຮັບສົ່ງທີ່ບໍ່ແມ່ນເມດີເຄດ.
- ຢາທີ່ທ່ານໝໍສັ່ງທີ່ບໍ່ແມ່ນຢາປົວໂຣກຈິດ.
- ການບໍຣິການຕ່າງໆຈາກບ່ອນປິ່ນປົວນອກເຄືອຄ່າຍວຽກງານຂອງ NSMHA ເວັ້ນເສັຽແຕ່ໄດ້ຮັບອະນຸມັດຈາກຫ້ອງການ NSMHA ກ່ອນ.

### ແວບໄຊທ໌ຂອງຫ້ອງການ NSMHA: http://nsmha.org

ເພື່ອເປັນການແຈ້ງຂ່າວໃຫ້ຊຸມຊົນສຸຂະພາບຈິດຮູ້, ຫ້ອງການ NSMHA ອອກປະກາດທາງແວບໄຊທ໌ແລະການພິມອອກວາຣະສານ *ການສວ່າງເຊົາທົ່ວເຂດເຊົາດ໌*. ເພື່ອເຂົ້າຫາແວບໄຊທ໌ຂອງພວກເຮົາໃຫ້ເປີດເບິ່ງທີ່ http://nsmha.org
ເພື່ອຈອງໜັງສືພິມຂອງພວກເຮົາ, ໃຫ້ໂທ 360.416.7013 / 1.800.684.3555
ຫລືອີເມລ໌ທີ່ aroundthesound@nsmha.org.

# ແຜນຮັກສາຜົນປະໂຍດຂອງປະຊາກອນ (Ombuds)

ຫ້ອງການຮັກສາຜົນປະໂຍດຕ່າງໆຂອງປະຊາກອນ(Ombuds)ໃນເຂດເຊົາດ໌ເໜືອໃຫ້ການແທນຕົວໂດຍກົງແກ່ຜູ້ຊົມໃຊ້ທຸກຄົນທີ່ຮ້ອງຂໍເອົາ ຫລືໄດ້ຮັບການບໍຣິການດ້ານສຸຂະພາບຈິດ ທີ່ຢູ່ໃນເຂດໄອແລນດ໌ຄາວຕີ້, ແຊນວານຄາວຕີ້, ສະແກັດຈິຕຄາວຕີ້, ແລະວັດຄໍາຄາວຕີ້.

ໃຫ້ໂທຫາຫ້ອງການຮັກສາຜົນປະໂຍດຂອງປະຊາກອນຕ່າງໆ (Ombuds) ຖ້າທ່ານຮູ້ສຶກວ່າສິດທິຕ່າງໆຂອງທ່ານຫາກຖືກຝ່າຝືນຫລືທ່ານ ບໍ່ໄດ້ຮັບການບໍຣິການຕ່າງໆພຽງພໍ. ວຽກຂອງຫ້ອງການອອມບັດສ໌ຕ່າງໆ (Ombuds) ກໍ່ຄືຮັບແກ້ໄຂບັນຫາທີ່ຕອບ ສະໜອງຄວາມຕ້ອງການຈໍາເປັນຕ່າງໆຂອງທ່ານ.ການບໍຣິການຕ່າງໆແມ່ນຖືກເກັບເປັນຄວາມລັບສ່ວນຕົວ, ຟຣີ, ແລະກົດໝາຍກໍ່ປ້ອງກັນທ່ານຈາກການແກ້ແຄ້ນໃດໜຶ່ງ.

ຫ້ອງການຮັບສາຜົນປະໂຍດຕ່າງໆຂອງປະຊາກອນ (Ombuds) *ສາມາດ*:

- ເປັນຕົວແທນໃຫ້ຜູ້ຊົມໃຊ້ທັງຫລາຍ.
- ຮັບເອົາຄວາມຮ້ອງທຸກຈາກຜູ້ຊົມໃຊ້ທັງຫລາຍ, ຫລືເຊັນໃບອະນຸຍາດຮ່ວມກັບຜູ້ຊົມໃຊ້ທັງຫລາຍຈາກຄອບຄົວຫລືໝູ່ຄູ່ຂອງເຂົາເຈົ້າ.
- ຮັບຟັງ, ເກັບກໍາ, ແລະສືບສວນຄວາມຮ້ອງທຸກຕ່າງໆ.
- ຊ່ອຍແກ້ໄຂຄວາມຮ້ອງທຸກຕ່າງໆແບບບໍ່ເປັນທາງການ, ໂດຍຜ່ານການອະນຸຍາດຈາກຜູ້ຊົມໃຊ້.
- ຄົ້ນຄວ້າແລະສືບສວນຄວາມຈິງຕ່າງໆ, ນະໂຍບາຍຕ່າງໆ, ສັນຍາຕ່າງໆ, ຣະບົບການຕ່າງໆ, ແລະກົດໝາຍທີ່ກ່ຽວຂ້ອງ ກັບການຮ້ອງທຸກ.
- ຊ່ອຍຜູ້ຊົມໃຊ້ຜ່ານຜ່າຄວາມຮ້ອງທຸກ, ການຟັງຄວາມເປັນທໍາແລະຣະບົບການອຸທອນເຣື່ອງ, ເມື່ອໃດຫາກຕ້ອງການ.

ຫ້ອງການອອມບັດສ໌ຕ່າງໆ (Ombuds) *ບໍ່ສາມາດ*:

- ໃຫ້ຄໍາແນະນໍາດ້ານກົດໝາຍ.
- ເປັນຜູ້ກໍາສໍານວນຫລືໃຫ້ການບໍາບັດໃດໜຶ່ງ.
- ໃຫ້ການພະຍາບານແລະຄວາມເຫັນຕ່າງໆກ່ຽວກັບບ່ອນພະຍາບານ.

ຂ້າພະເຈົ້າຈະຕິດຕໍ່ກັບຫ້ອງການອອມບັດສ໌ (Ombuds) ໄດ້ແນວໃດ?

ຕາມບ່ອນຢູ່ທີ່: 309 South Third Street, Mount Vernon WA 98273, 360.419.3391/1.888.336.6164
ເມື່ອຈໍາເປັນ, ຫ້ອງການອອມບັດສ໌ຕ່າງໆແມ່ນມີໃຫ້ຕອບສະໜອງທ່ານຕາມສະຖານທີ່ໃດໜຶ່ງຕາມທີ່ໄດ້ຕົກລົງກັນ..

# ໂຣກຈິດນີ້ເປັນເຣື່ອງທໍາມະດາຣາວໃດ?

ຄົນອະເມຣິກັນເກືອບ 54 ລ້ານຄົນແມ່ນໄດ້ຮັບຜົນສະທ້ອນຈາກຄວາມຜິດປົກກະຕິຕ່າງໆທາງດ້ານຈິດໃຈຢ່າງໜຶ່ງຫລືຫລາຍກວ່າ. ປະມານ 19.6 ລ້ານຄົນອະເມຣິກັນໄວຜູ້ໃຫຍ່,ຫລື 9.2 ເປີເຊັນ, ໄດ້ຮັບຄວາມທຸກທໍຣະມານສາຫັດຈົນເຖິງຂັ້ນຣົບກວນກິດຈະກໍາສໍາຄັນຕ່າງໆ ຂອງຊີວິດສ່ວນໃຫຍ່. ຕາມການຄາດຄະເນວ່າ 2.7 ລ້ານຄົນຂອງເດັກນ້ອຍ, ຊຶ່ງຖືກຣາຍງານໂດຍພໍ່ແມ່/ຜູ້ດູແລຂອງເຂົາເຈົ້າວ່າໄດ້ຮັບ ຄວາມທຸກທໍຣະມານທີ່ສາຫັດຫລືບັນຫາທາງດ້ານອາຣົມທີ່ອາດຣົບກວນກັບຊີວິດຄອບຄົວຂອງເຂົາເຈົ້າ, ຄວາມສາມາດຕໍ່ການຮຽນຂອງເຂົາເຈົ້າ, ແລະການສ້າງສັມພັນທະພາບສາຍສໍາພັນຕ່າງໆຂອງເຂົາເຈົ້າ.

## ແມ່ນຫຍັງຄືສັນຍາເຕືອນອາການປ່ວຍເປັນຕ່າງໆຂອງໂຣກຈິດ?

- ຄວາມກົດດັນທາງດ້ານອາຣົມຢ່າງຍາວນານ (ອາການໂສກເສົ້າຫລືຄວາມງຸດງິດຈິດໃຈ)
- ຄວາມເຫັນວິຖານຫລືການເຫັນພາບລວງຕ່າງໆ
- ແນວຄິດຕ່າງໆໃນການໝາຍຂ້າຕົນເອງ/ຄວາມຕາຍ
- ຄວາມອິດເມື່ອຍເກີນຂອບເຂດ/ການນອນ ຫລືຄວາມບໍ່ສາມາດຫລັບນອນໄດ້
- ການຖອນຕົວຈາກສັງຄົມ
- ການປ່ຽນແປງບຸກຄະລິກລັກສະນະຢ່າງກະທັນຫັນ
- ການຜັນແປຮູບແບບຄວາມສຳພັນຕ່າງໆທາງສັງຄົມ
- ອາຣົມຄວາມຮູ້ສຶກທີ່ສູງສຸດແລະຕ່ຳສຸດ
- ການສະແດງອອກຊຶ່ງຄວາມປະພຶດທີ່ແປກປະຫລາດ, ອາການຫົວອອກມາທີ່ບໍ່ເໝາະສົມ, ການໃຊ້ຄວາມເວົ້າ/ພາສາທີ່ແປກປະຫລາດ
- ບໍ່ສາມາດປະເຊີນກັບບັນຫາຫລືກິດຈະວັດປະຈຳວັນໄດ້
- ຮ້ອງໄຫ້ເກີນຂອບເຂດ/ບໍ່ສາມາດຮ້ອງໄຫ້ໄດ້
- ມີຄວາມຮູ້ສຶກໃຈຮ້າຍຮຸນແຮງຈາກຄົນໃດໜຶ່ງຊຶ່ງແຕ່ກ່ອນເຄີຍເປັນຄົນທີ່ດີ ແລະອາການຮ້ອງທຸກ
- ຄະແນນລຸດຣະດັບການຮຽນຢ່າງໃຫຍ່ຫລວງ/ການເຮັດວຽກງານ
- ການຖືກຜົນຮ້າຍຈາກສານຢາເສບຕິດໃດໜຶ່ງ

ຖ້າທ່ານຫລືສະມາຊິກຄອບຄົວຂອງທ່ານຫາກມີອາການປ່ວຍເປັນໂຣກຈິດ, ກະຣຸນາຕິດຕໍ່ຫາທ່ານໝໍຂອງທ່ານ ຫລືໝໍທີ່ຊ່ຽວຊານດ້ານສຸຂະພາບຈິດເພື່ອການກວດສອບຕີຣາຄາ. ທ່ານສາມາດເຂົ້າຫາການບໍຣິການສຸຂະພາບຕ່າງໆຂອງມວນຊົນໄດ້ ໂດຍຜ່ານສາຍເຂົ້າເຖິງທີ່ເລກ 1.888.693.7200.

## ການມອບສັນທະ(ພິໄນກຳ) ສຸຂະພາບຈິດໃວ້ລ່ວງໜ້າຄືຫຍັງ?

ມັນແມ່ນເອກະສານບົດຂຽນທີ່ອະທິບາຍເຖິງສິ່ງທີ່ທ່ານຢາກໃຫ້ເກີດຂຶ້ນຖ້າທ່ານຫາກຂາດຄວາມສາມາດຍ້ອນໂຣກຈິດຊຶ່ງການ ຕັດສິນໃຈຂອງທ່ານນັ້ນຫາກພິການໄປແລະ/ຫລືທ່ານບໍ່ສາມາດສື່ສານກັບຄົນອື່ນຢ່າງມີປະສິດທິພາບໄດ້. ມັນສາມາດບອກຄົນອື່ນໄດ້ວ່າທ່ານຕ້ອງການແລະບໍ່ຕ້ອງການແນວໃດ, ແລະມັນສາມາດຊີ້ບົ່ງບອກເຖິງບຸກຄົນທີ່ທ່ານໃຫ້ອະນຸຍາດ ໃນການຕັດສິນໃຈແທນທ່ານໄດ້.

## ສິດທິຕ່າງໆກ່ຽວກັບສຸຂະພາບຈິດຂອງທ່ານ

**ໃນນາມເປັນຜູ້ໄດ້ຮັບການບໍຣິການສຸຂະພາບຈິດມວນຊົນຜູ້ໜຶ່ງ, ສິດທິຕ່າງໆຂອງຂ້າພະເຈົ້າມີຫຍັງແດ່?**

- ເປັນຜູ້ໄດ້ຮັບການປິ່ນປົວດ້ວຍຄວາມນັບຖືແລະໃຫ້ກຽດ.
- ໄດ້ຮັບການປ້ອງກັນສິດທິຄວາມລັບສ່ວນຕົວໃວ້.
- ຊ່ອຍການຂຽນວາງແຜນການປິ່ນປົວແລະການບໍຣິການຕ່າງໆທີ່ຕອບສະໜອງຄວາມຕ້ອງການທີ່ຈຳເປັນຂອງທ່ານ.

- ເພື່ອມີສ່ວນຮ່ວມໃນການຕັດສິນກ່ຽວກັບການພະຍາບານໂຣກຈິດຂອງທ່ານ.
- ເພື່ອໄດ້ຮັບການບໍຣິການຕ່າງໆໃນສະຖານທີ່ໆປອດຈາກສິ່ງກີດກັ້ນໃດໜຶ່ງ (ຊ່ອງທາງເຂົ້າຫາ).
- ເພື່ອຂໍຂ່າວຂໍ້ມູນເຣື່ອງຊື່ຕ່າງໆ, ສະຖານທີ່ຕ່າງໆ, ເລກໂທຣະສັບຕ່າງໆ, ແລະພາສາຕ່າງໆສຳຣັບອົງການທ້ອງຖິ່ນຕ່າງໆ.
- ເພື່ອໄດ້ຮັບຈຳນວນແລະໄລຍະເວລາຂອງການປິ່ນປົວທີ່ທ່ານຕ້ອງການຈຳເປັນ.
- ເພື່ອຂໍຂ່າວຂໍ້ມູນເຣື່ອງໂຄງຮ່າງການຈັດຕັ້ງແລະການດຳເນີນງານຂອງຫ້ອງການ NSMHA.
- ເພື່ອໄດ້ຮັບການບໍຣິການຕ່າງໆພາຍໃນ 2 ຊົ່ວໂມງສຳຣັບການປິ່ນປົວທີ່ສຸກເສີນແລະ 24 ຊົ່ວໂມງສຳຣັບການປິ່ນປົວດ່ວນ.
- ປອດຈາກການກີດກັ້ນຫລືໜ່ວງໜ່ຽວໃດໜຶ່ງ.
- ເພື່ອໄດ້ຮັບການບໍຣິການທີ່ເໝາະສົມກັບອາຍຸແລະວັດທະນະທຳ.
- ເພື່ອໃຫ້ໄດ້ນາຍພາສາທີ່ໄດ້ຮັບການຢັ້ງຢືນແລະເອກະສານຕ່າງໆທີ່ແປໂດຍບໍ່ໄດ້ຄິດຄ່າໃດໆຕໍ່ທ່ານ.
- ເພື່ອເຂົ້າໃຈເຖິງທາງເລືອກການປິ່ນຕ່າງໆທີ່ມີໄວ້ໃຫ້ແລະພ້ອມທັງທາງເວັ້ນຕ່າງໆ.
- ເພື່ອປະຕິເສດການປິ່ນປົວທີ່ໄດ້ສະເໜີໃຫ້.
- ເພື່ອໄດ້ຮັບການປິ່ນປົວທີ່ບໍ່ມີການຈຳແນກແຍກຊັ້ນຕໍ່ (ເຊັ່ນ: ອາຍຸ, ຊົນຊາດ, ປະເພດຂອງຄວາມປ່ວຍເປັນ).
- ເພື່ອປອດຈາກການຝ່າຝືນທຳຣາຍທາງດ້ານເພດ.
- ໄດ້ຮັບການອະທິບາຍປະເພດຢາຕ່າງໆທີ່ທ່ານໝໍສັ່ງແລະຜົນຮ້າຍຕ່າງໆທີ່ອາດຕິດຕາມມາ.
- ເພື່ອຂຽນໃບພິໄນກຳໄວ້ລ່ວງໜ້າ, ຊຶ່ງເວົ້າເຖິງທາງເລືອກແລະຄວາມຕ້ອງການຕ່າງໆຂອງທ່ານ
  ສຳຣັບການພະຍາບານໂຣກຈິດ.
- ເພື່ອໄດ້ຮັບການບໍຣິການທີ່ມີຄຸນນາພາບຊຶ່ງມີຄວາມຈຳເປັນໃນການປິ່ນປົວ.
- ເພື່ອໄດ້ຮັບຄຳເຫັນທີ່ສອງຈາກທ່ານໝໍໂຣກຈິດ.
- ເພື່ອປະກອບຄຳຮ້ອງທຸກຕໍ່ອົງການຫລືຫ້ອງການ NSMHA.
- ເພື່ອປະກອບຄຳຮ້ອງການຈ່າຍລ່ວງໜ້າສຳຣັບຄົນໄຂ້ພາຍໃນ (PIHP) ການອຸທອນໂດຍອີງຕາມບົດບັນທຶກທີ່ໄດ້ຂຽນໄວ້ໃນແຜນການລົງມືປະຕິບັດການຂອງ (PIHP Notice of Action) (ສຳຣັບຜູ້ລົງທະບຽນກັບແຜນເມດິເຄດ).
- ເພື່ອເລືອກທ່ານໝໍສຸຂະພາບຈິດຂອງທ່ານ ຫລືເລືອກໃຫ້ລູກຂອງທ່ານຜູ້ທີ່ອາຍຸລຸດສິບສາມປີ.
- ເພື່ອປ່ຽນທ່ານໝໍສຸຂະພາບຈິດທັງຫລາຍຂອງທ່ານ ໃນຊ່ວງເວລາ 90 ມື້, ແລະບາງເທື່ອກໍ່ອາດເລື້ອຍກວ່ານັ້ນ.
- ເພື່ອປະກອບການຮ້ອງຂໍຕໍ່ອຳນາດການປົກຄອງຟັງເຣື່ອງ (ຄວາມເປັນທຳ).
- ເພື່ອຂໍເອົາແລະໄດ້ຮັບສຳເນົາເອກະສານບັນທຶກການປິ່ນປົວຕ່າງໆຂອງທ່ານແລະຂໍການປ່ຽນແປງຕ່າງໆ.
- ເພື່ອປອດຈາກການແກ້ແຄ້ນຄືນ.
- ເພື່ອຂໍເອົານະໂຍບາຍແລະຣະບົບການຕ່າງໆຂອງຫ້ອງການ NSMHA ແລະອົງການສຸຂະພາບຈິດຊຸມຊົນ (CMHA) ຍ້ອນວ່າມັນບັນຈຸສິດທິຕ່າງໆຂອງທ່ານຢູ່ໃນນັ້ນ.

ແຕ່ລະຄົນກໍ່ຍັງເລີ່ມການຮ້ອງທຸກຕ່າງໆກ່ຽວກັບການເຮັດບໍ່ຖືກຕ້ອງຕາມຂໍ້ຮຽກຮ້ອງຕ່າງໆຂອງພິໄນກຳສຳຣັບການພະຍາບານໂຣກຈິດຂອງພະແນກສຸຂະພາບຈິດ (MHD) ທີ່ເລກໂທ 1.888.713.6010 ໄດ້.

# ການຕິດຕໍ່ພົວພັນຕ່າງໆ

| | |
|---|---|
| ການສຸກເສີນທີ່ຂູ່ເຂັ້ນຕໍ່ຊີວິດ | 911 |
| 24- ຊົ່ວໂມງຕອບຂານຕໍ່ການດູແລວິກິດຕະການ | 800.584.3578 |
| ສະພາບທີ່ບໍ່ສຸກເສີນ & ແລະການນັດພົບຕ່າງໆເປັນເທື່ອທຳອິດ | 888.693.7200 |

ລາຍງານການປອມແປງ ແລະການຖືກຜົນຮ້າຍໂດຍໂທຫາເຈົ້າໜ້າທີ່ຫ້ອງການໆປອມແປງແລະຖືກຜົນຮ້າຍ ທ່ານຊາຣ໌ ເບັນຈະມິນ (Charles Benjamin) ທີ່ເລກໂທ 1.800.684.3555 / 360.416.7013 ຫລື ອີເມລ໌ທີ່: charles_benjamin@nsmha.org. ທ່ານອາດລາຍງານໂດຍບໍ່ປະສົງບອກຊື່ກໍ່ໄດ້.

# NSMHA ໝໍສຸຂະພາບຈິດທັງຫລາຍທີ່ໄດ້ລົງສັນຍາກັນ

## ເຂດໄອແລນດ໌ຄາວຕີ້ (Island County)

| | |
|---|---|
| ຄອມພາສ ແຮລທ໌, ຄາມາໂນໄອແລນດ໌ (Compass Health, Camano Island) | 360.387.2736/1.800.457.9303 |
| ຄອມພາສ ແຮລທ໌, ຄູບພວີລ (Compass Health, Coupeville) | 360.678.5555/1.800.457.9303 |

## ເຂດແຊນວານຄາວຕີ້ (San Juan County)

| | |
|---|---|
| ຄອມພາສ ແຮລທ໌ (Compass Health) | 360.378.2669/1.800.457.9303 |

## ເຂດສະແກັດຈິຕຄາວຕີ້ (Skagit County)

| | |
|---|---|
| ການບໍຣິການຕ່າງໆຂອງຊຸມຊົນຄາທໍລິກ (Catholic Community Services) | 360.856.3054/1.888.504.9992 |
| ຄອມພາສ ແຮລທ໌ (Compass Health) | 360.419.3500/1.800.457.9303 |
| ຊີມາຄລີນິກ (Sea Mar Clinic) | 360.428.8912/1.866.923.2312 |
| ຊັນໄຣສ໌ ເຊີວິສເສສ (Sunrise Services) | 360.336.3762/1.888.774.9658 |

## ເຂດສະໂນໂຮມິສຄາວຕີ້ (Snohomish County)

| | |
|---|---|
| ຄອມພາສ ແຮລທ໌ (Compass Health) | 425.349.6200/1.800.457.9303 |
| ບຣິຈເວ (bridgeways) | 425.513.8213/1.877.355.8668 |
| ຊີມາຄລີນິກ (Sea Mar Clinic) | 425.347.5415/1.866.923.2312 |
| ການບໍຣິການຕ່າງໆຂອງຊຸມຊົນຄາທໍລິກ (Catholic Community Services) | 425.257.2111/1.888.504.9996 |
| ຊັນໄຣສ໌ ເຊີວິສເສສ (Sunrise Services) | 425.347.3149/1.888.774.9658 |

## ເຂດວັດຄໍາຄາວຕີ້ (Whatcom County)

| | |
|---|---|
| ການໃຫ້ຄວາມປຶກສາວັດຄໍາ ແລະ ຫ້ອງພະຍາບານໂຣກຈິດ (Whatcom Counseling & Psychiatric Clinic) | 360.676.2220/1.888.311.0120 |
| ການບໍຣິການຕ່າງໆຂອງຊຸມຊົນຄາທໍລິກ (Catholic Community Services) | 360.676.2164/1.888.504.2221 |
| ເຂດສູນກາງເລກວັດຄໍາ (Lake Whatcom Center) | 360.676.6000/1.888.676.6002 |
| ຊີມາຄລີນິກ (Sea Mar Clinic) | 360.734.5458/1.866.923.2312 |
| ຫ້ອງພະຍາບານສຸຂະພາບຊຸມຊົນອິນເຕີເຟຕທ໌ (Interfaith Community Health Clinic) | 360.676.6177/1.877.235.6850 |

## ເພື່ອຢາກຮູ້ຂ່າວເພີ່ມເຕີມ, ໃຫ້ໂທຫາຜູ້ປະສານງານສຸຂະພາບຈິດໃນເຂດຄາວຕີ້ຂອງທ່ານ :

| | |
|---|---|
| ຜູ້ປະສານງານເຂດໄອແລນດ໌ຄາວຕີ້ (Island County Coordinator) | 360.678.7881 |
| ຜູ້ປະສານງານເຂດແຊນວານຄາວຕີ້ (Island County Coordinator) | 360.378.4474 |
| ຜູ້ປະສານງານເຂດສະແກັດຈິຕຄາວຕີ້ (Island County Coordinator) | 360.336.9395 |
| ຜູ້ປະສານງານເຂດສະໂນໂຮມິສຄາວຕີ້ (Island County Coordinator) | 425.388.7200 |
| ຜູ້ປະສານງານເຂດວັດຄໍາຄາວຕີ້ (Island County Coordinator) | 360.676.6724 |

ອົງການຕ່າງໆທີ່ຢູ່ນອກເຂດເຊົາດ໌ເໜືອທີ່ຊອກເອົາການຢັ້ງຢືນແລະ/ຫລື ຄວາມເຫັນພ້ອມສໍາຣັບບຸກຄົນທັງຫລາຍທີ່ຖືກຄຸ້ມກັນໂດຍ ແຜນສຸຂະພາບຈິດຄົນໄຂ້ພາຍໃນທີ່ໄດ້ຈ່າຍລ່ວງໜ້າຢູ່ເຂດເຊົາດ໌ເໜືອ ໃຫ້ໂທ 1.888.693.7200 (ສາຍເຂົ້າເຖິງ).